# ແຈ້ງການກ່ຽວກັບຄວາມຜິດພາດ ແລະ ມາດຕະການແກ້ໄຂ

ສູນດູແລສຸຂະພາບຂອງ UC Davis (UCDMC, UC Davis Medical Center) ໄດ້ກວດພົບບັນຫາໃນວັນທີ 15 ກໍລະກົດ 2017 ຮ່ວມກັບການກວດສອບ IRS ທີ່ຍັງບໍ່ສໍາເລັດ, ຊຶ່ງບໍ່ໄດ້ມີການ “ລົງເຜີຍແຜ່” ເອກະສານ ໂຄງການຊ່ວຍເຫຼືອດ້ານການເງິນ (FAP, Financial Assistance Program) (ເຫັນໄດ້ຊັດເຈນວ່າ ບໍ່ສາມາດໂຫລດເອກະສານເຂົ້າໄປໃນເວັບໄຊທ໌ຈົນຮອດດຽວນີ້ໄດ້). ປັດຈຸບັນ, ເວັບໄຊທ໌ນີ້ ສາມາດລິ້ງເຂົ້າໄປຫາເອກະສານ FAP ທີ່ຕ້ອງການ (ລວມທັງ ສັງລວມເອກະສານທີ່ແປເປັນພາສາອື່ນໆ). [ຈິ່ງເຂົ້າເບິ່ງເລີ້ງ].

ບຸກຄົນໃດກໍ່ຕາມທີ່ບໍ່ໄດ້ສະໝັກຂໍການຊ່ວຍເຫຼືອດ້ານການເງິນກ່ອນໜ້ານີ້ ຍ້ອນພວກເຂົາບໍ່ຮູ້ວ່າສາມາດສະໝັກຂໍການພິຈາລະນາຈາກ FAP ໂດຍບໍ່ເສຍຄ່າ. UCDMC ບໍ່ສາມາດກໍານົດໄດ້ວ່າແມ່ນໃຜອາດຈະເຮັດໃຫ້ເກີດຄວາມຜິດພາດໃນການໂຫລດເອກະສານ FAP ລົງເຜີຍແຜ່ໃນໂລກອອນລາຍ໌.

ນະໂຍບາຍຂອງ FAP ຍັງບໍ່ໄດ້ລະບຸຂີດຈໍາກັດໃນການບໍລິການທີ່ໄດ້ຮັບການຄຸ້ມຄອງ. ເວັ້ນເສຍແຕ່ມີການເປີດເຜີຍວ່າຜູ່ຈັດຫາ UCDMC ໃດໜຶ່ງ ບໍ່ໄດ້ຮັບການຄຸ້ມຄອງໂດຍ FAP, ທຸກການບໍລິການທີ່ມີຄວາມຈໍາເປັນ ດ້ານການດູແລສຸຂະພາບ ແລະ ເຫດການສຸກເສີນ ທີ່ໃຫ້ບໍລິການຢູ່ UCDMC ແມ່ນໄດ້ຖືກຄຸ້ມຄອງໂດຍ FAP.

ນອກຈາກນັ້ນ, ນະໂຍບາຍຂອງ FAP ບໍ່ໄດ້ລວມເອົາວິທີການຄິດໄລ່ສໍາລັບ “ຈໍານວນເງິນທົ່ວໄປທີ່ອອກໃສ່ໃບບິນ” ຫຼື “AGB”. UCDMC ນໍາໃຊ້ “ວິທີຄາດຄະເນ” ໃນການຄິດໄລ່ AGB, ຊຶ່ງຮຽກຮ້ອງໃຫ້ໂຮງໝໍ ປະເມີນຈໍານວນເງິນທີ່ຈະຕ້ອງຈ່າຍໂດຍ Medicare ໃນກໍລະນີສຸກເສີນ ຫຼື ການດູແລທີ່ມີຄວາມຈໍາເປັນດ້ານການແພດອື່ນໆ ຖ້າວ່າບຸກຄົນທີ່ມີສິດໄດ້ຮັບ FAP ແມ່ນຜູ່ທີ່ໄດ້ຮັບການຊ່ວຍເຫຼືອທີ່ມີຄ່າບໍລິການຈາກ Medicare. ຄວາມໝາຍຂອງຄໍາວ່າ “ຄ່າບໍລິການ Medicare” ປະກອບມີພຽງແຕ່ປະກັນສຸຂະພາບທີ່ຢູ່ພາຍໃຕ້ Medicare ພາກ A ແລະ B ຂອງຫົວເລື່ອງ XVII ຂອງກົດໝາຍປະກັນສັງຄົມ (Social Security Act), ແລະ ບໍ່ແມ່ນແຜນປະກັນສຸຂະພາບທີ່ບໍລິຫານພາຍໃຕ້ການຊ່ວຍເຫຼືອຂອງ Medicare.

UCDMC ຈະສືບຕໍ່ຕິດຕາມ ການປະຕິບັດຕາມພັນທະຂອງ FAP ລວມທັງ ຮັບປະກັນວ່າ ເອກະສານຂອງ FAP ໄດ້ມີການອອກເຜີຍແຜ່ໃນໂລກອອນລາຍ໌.

UCDMC ເສຍໃຈທີ່ເຫັນວ່າມີຄວາມຜິດພາດກ່ຽວກັບບັນຫານີ້, ແລະ ຂໍຊົມເຊີຍຢ່າງຈິງໃຈຕໍ່ການໃຫ້ຄວາມຊ່ວຍເຫຼືອ ແລະ ໄດ້ຮັບການພິຈາລະນາ ການບໍລິການລາຍໄດ້ພາຍໃນ (Internal Revenue Services) ກ່ຽວກັບບັນຫານີ້.

ຖ້າມີຄໍາຖາມເພີ່ມເຕີມກ່ຽວກັບບັນຫານີ້ ສາມາດຕິດຕໍ່ຫາ ທ່ານ ມິຈສ໌ ເມີຣີ (Mitch Murri), ຫົວໜ້າບໍລິການລາຍຮັບຂອງຄົນເຈັບ (Director of Patient Revenue Services) ທີ່ (916) 734-9820 ຫຼື mmurri@ucdavis.edu.